# ທ່ານ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ລົງເຄື່ອນໄຫວຢ້ຽມຢາມ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ



ໃນຕອນເຊົ້າຂອງວັນທີ 17 ສິງຫາ 2022 ທີ່ຊັ້ນ II ອາຄານຕະຫຼາດຫຼັກຊັບລາວ **ທ່ານ ບຸນເຫຼືອ ສິນໄຊວໍຣະວົງ** ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ລົງຢ້ຽມຢາມບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເຊິ່ງໃຫ້ກຽດຕ້ອນຮັບໃນຄັ້ງນີ້ ນຳໂດຍ **ທ່ານ ນ. ວິນຄຳ ລຸນທອນ ຜູ້ອຳນວຍການໃຫຍ່** ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ພ້ອມດ້ວຍຄະນະຜູ້ອຳນວຍການ, ຄະນະພະແນກ ແລະ ພະນັກງານທັງໝົດ.

ທ່ານ **ນ. ວິນຄຳ ລຸນທອນ ຜູ້ອຳນວຍການໃຫຍ່** ກໍໄດ້ລາຍງານໂດຍຫຍໍ້ກ່ຽວກັບສະພາບໂດຍລວມ ໃນປະຈຸບັນ ບໍລິສັດ ຂສລ ມີພະນັກງານທັງໝົດຈຳນວນ 22 ທ່ານ ໃນນັ້ນປະກອບມີ ຄະນະຜູ້ອຳນວຍການ 03 ທ່ານ, ຄະນະພະແນກ 04 ທ່ານ, ພະນັກງານວິຊາການ 11 ທ່ານ ແລະ ພະນັກງານທົດສອບ 04 ທ່ານ ພະນັກງານທຸກຄົນໄດ້ເອົາໃຈໃສ່ໃນການປະຕິບັດວຽກງານຂອງຕົນ ຢ່າງຫ້າວຫັນ ແລະ ມີຄວາມຮັບຜິດຊອບ, ມີຄວາມສາມັກຄີພາຍໃນ ແລະ ພາຍນອກ ຢ່າງເປັນປົກກະຕິ ເພື່ອພ້ອມກັນປະຕິບັດວຽກງານຕາມແຜນການໃຫ້ສຳເລັດຕາມຄາດໝາຍ.




ຜ່ານການເຄື່ອນໄຫວວຽກງານໄລຍະ 06 ເດືອນຕົ້ນປີ 2022 ບໍລິສັດ ຂສລ ມີກຳໄລກ່ອນອາກອນ ຈຳນວນ **96.359.057,58** ກີບ ລາຍຮັບຫຼັກແມ່ນມາຈາກການບໍລິການຂໍ້ມູນຂ່າວສານສິນເຊື່ອແບບທັນທີ (ອອນລາຍ) ໃຫ້ແກ່ສະມາຊິກ ເພື່ອນຳໃຊ້ເຂົ້າໃນການພິຈາລະນາສິນເຊື່ອ ກໍຄືວິເຄາະຄວາມສ່ຽງຂອງລູກຄ້າກ່ອນການອະນຸມັດເງິນກູ້ ແລະ ນຳໃຊ້ເຂົ້າໃນວຽກງານອື່ນໆ ປະຈຸບັນບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ມີສະມາຊິກທັງໝົດ ຈຳນວນ **172 ແຫ່ງ (ທະນາຄານ 40 ແຫ່ງ, ສະຖາບັນການເງິນຈຸລະພາກ 130 ແຫ່ງ ແລະ ພາກສ່ວນອື່ນ ຈຳນວນ 02 ແຫ່ງ)** ແລະ ມີຜະລິດຕະພັນໃຫ້ບໍລິການ ຄື: ຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອສຳລັບບຸກຄົນ, ຜະລິດຕະພັນຂໍ້ມູນຂ່າວສານສິນເຊື່ອສຳລັບນິຕິບຸກຄົນ, ຜະລິດຕະພັນຄະແນນສິນເຊື່ອສຳລັບບຸກຄົນ ແລະ ຜະລິດຕະພັນຂໍ້ມູນການຊົມໃຊ້ໄຟຟ້າ.




ພ້ອມດຽວກັນນັ້ນ, ບໍລິສັດ ຂສລ ກໍຈະເອົາໃຈໃສ່ພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອໃຫ້ກາຍເປັນສູນກາງໃນການແລກປ່ຽນຂໍ້ມູນທີ່ກ່ຽວຂ້ອງ ເພື່ອນຳມາສ້າງຜະລິດຕະພັນໃຫ້ໄດ້ຕາມມາດຕະຖານສາກົນ ທີ່ມີຄວາມຄົບຖ້ວນ, ມີຄຸນນະພາບ, ມີຄວາມທັນສະໄໝ, ຮັບປະກັນຄວາມປອດໄພດ້ານຂໍ້ມູນຂ່າວສານສິນເຊື່ອ ກ້າວໄປສູ່ການເຊື່ອມໂຍງກັບພາກພື້ນ ແລະ ສາກົນໃນອານະຄົດ ປະກອບສ່ວນເຂົ້າໃນການກຳນົດນະໂຍບາຍເງິນຕາຂອງພາກລັດ ແນ່ໃສ່ເພື່ອຮັກສາຄວາມມີສະຖຽນລະພາບທາງດ້ານການເງິນ-ເງິນຕາ, ຄຸ້ມຄອງບັນດາສະຖາບັນການເງິນ, ສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ສັງຄົມສາມາດເຂົ້າເຖິງສິນເຊື່ອໄດ້ງ່າຍຂຶ້ນ ແລະ ສົ່ງເສີມໃຫ້ສັງຄົມມີວິໄນທາງດ້ານການເງິນ.

ໃນຕອນທ້າຍ ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍໄດ້ມີທິດຊີ້ນຳໃຫ້ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ສືບຕໍ່ຈັດຕັ້ງປະຕິບັດແນວຄິດການເມືອງຂອງຕົນ, ຮັກສາຄວາມສາມັກຄີເປັນເອກະພາບພາຍໃນ ທີ່ເປັນມູນເຊື້ອອັນດີງາມແລ້ວໃຫ້ມີຄວາມໜັກແໜ້ນຂຶ້ນກວ່າເກົ່າ, ສືບຕໍ່ເປັນໃຈກາງເຕົ້າໂຮມຄວາມສາມັກຄີ ແລະ ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານ ກໍຄືແຜນທຸລະກິດ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ທີ່ຕິດພັນກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ໃຫ້ສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.




≠ ບົດຂ່າວ: ບໍລິສັດ ຂສລ